ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມທາບທາມຄຳເຫັນເປີດ ກວ້າງຕໍ່ "ຮ່າງກົດໝາຍວ່າດ້ວຍລະບົບການຊຳລະທາງເອເລັກໂຕຣນິກ (ສະບັບປັບປຸງ)"



ໃນວັນທີ 26 ກໍລະກົດ 2023 ນີ້, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມທາບທາມຄຳເຫັນເປີດກວ້າງຕໍ່ "ຮ່າງກົດໝາຍວ່າດ້ວຍລະບົບການຊຳລະທາງເອເລັກໂຕຣນິກ (ສະບັບປັບປຸງ)" ຂຶ້ນທີ່ຫ້ອງປະຊຸມສະໂມ ສອນສະຖາບັນທະນາຄານ ໂດຍການເປັນປະທານຂອງ ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ, ມີບັນ ດາສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງນະຄອນຫຼວງ, ບັນດາຄະນະກົມ ທຫລ, ຕາງໜ້າຈາກສະພາແຫ່ງຊາດ, ບັນດາກະຊວງ ແລະ ວິຊາການພາຍໃນ ທຫລ ທີ່ກ່ຽວຂ້ອງເຂົ້າຮ່ວມ 100 ກວ່າທ່ານ.

ການຈັດກອງປະຊຸມຄັ້ງນີ້, ແມ່ນເພື່ອທາບທາມຄຳເຫັນເປີດກວ້າງຕໍ່ "ຮ່າງກົດໝາຍວ່າດ້ວຍລະບົບການຊຳລະທາງເອເລັກໂຕຣນິກ (ສະບັບປັບປຸງ)" ໂດຍຈັດຂຶ້ນໃນທ່າມກາງບັນຍາກາດທີ່ ສປປ ລາວ ໄດ້ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ເວົ້າລວມສະເພາະໃນຂະແໜງທະນາຄານຂອງພວກເຮົາ ກໍ່ໄດ້ສຳເລັດກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ສະໄໝທີ IV. ພ້ອມທັງ ສຸມໃສ່ການສ້າງ, ປັບປຸງນິຕິກຳ ແລະ ຈັດຕັ້ງປະຕິບັດວຽກງານຕ່າງໆ ຕາມພາລະບົດບາດ ໂດຍສະເພາະວາລະແຫ່ງຊາດໃນ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນທີ່ ສປປ ລາວ ພວມກຳລັງປະເຊີນໜ້າ ແລະ ມີສິ່ງທ້າທາຍໃນ ຫຼາຍດ້ານ. ໃນປັດຈຸບັນ ວຽກງານດັ່ງກ່າວກໍ່ແມ່ນວຽກງານທີ່ສຳຄັນໃນການປັບປຸງກົນໄກນິຕິກຳຄຸ້ມຄອງ ແລະ ພັດທະນາ ລະບົບການ

ຊໍາລະໃຫ້ມີຄວາມເຂັ້ມແຂງ ມີປະສິດທິພາບ ແລະ ປະສິດທິຜົນ. ເນື່ອງຈາກລະບົບການຊໍາລະເປັນລະບົບທີ່ມີ ຄວາມສໍາຄັນ ທັງເປັນຂົວຕໍ່ເພື່ອອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນ ໃນການດໍາເນີນທຸລະກໍາທາງ ດ້ານການເງິນໃຫ້ມີຄວາມສະດວກ, ວ່ອງໄວ, ປອດໄພ ແລະ ໂປ່ງໃສ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງຜູ້ຊົມໃຊ້ ພ້ອມທັງສົ່ງເສີມການເຂົ້າເຖິງ ການບໍລິການທາງດ້ານການເງິນໃຫ້ນັບມື້ນັບຫຼາຍຂຶ້ນ.



ກອງປະຊຸມດັ່ງກ່າວໄດ້ດໍາເນີນໄປເປັນເວລາ 1 ວັນ ເຕັມໄປດ້ວຍບັນຍາກາດອັນຟົດຟື້ນ ໂດຍຜູ້ເຂົ້າຮ່ວມໄດ້ແລກປ່ຽນຄໍາຄິດເຫັນ ແລະ ມີຄໍາຖາມເຈາະຈີ້ມ ເພື່ອໃຫ້ຮ່າງກົດໝາຍວ່າດ້ວຍລະບົບການຊໍາລະທາງເອເລັກໂຕຣນິກ (ສະບັບປັບປຸງ) ໃຫ້ມີເນື້ອໃນສົມບູນຍິ່ງຂຶ້ນ.

**ຂ່າວ-ພາບ: ແຂກ ມູນລະໄມ + ສົມພິດ ທໍາມະວົງ**

*ຢູ່ເມືອງລາວ ໃຊ້ເງິນກີບລາວ*